ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 140 /ລບ
ນະຄອນຫຼວງວຽງຈັນ, ວັນທີ 22. 02. 2021.

# ດຳລັດ
# ວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດ
# (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 02/ທຫລ, ລົງວັນທີ 06 ມັງກອນ 2021.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ຄັງສຳຮອງເງິນຕາຕ່າງປະເທດ ເພື່ອຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະ ຄວາມສາມາດໃນການຊຳລະກັບຕ່າງປະເທດ ແນໃສ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ຂະຫຍາຍຕົວຢ່າງຍືນຍົງ.

### ມາດຕາ 2 ຄັງສຳຮອງເງິນຕາຕ່າງປະເທດ

ຄັງສຳຮອງເງິນຕາຕ່າງປະເທດ ແມ່ນຊັບສິນເປັນເງິນຕາຕ່າງປະເທດ ທີ່ສ້າງຂຶ້ນເພື່ອຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະ ຮອງຮັບການຊຳລະກັບຕ່າງປະເທດ ຊຶ່ງປະກອບດ້ວຍ:

1. ເງິນຕາຕ່າງປະເທດທີ່ເປັນທະນະບັດ ແລະ ເງິນຫຼຽນ ຫຼື ເງິນຝາກໃນບັນຊີທະນາຄານຕ່າງປະເທດດ້ວຍສະກຸນເງິນແຂງໃດໜຶ່ງ ແລະ ຢູ່ໃນປະເທດໃດໜຶ່ງ ຕາມການຕົກລົງເຫັນດີຂອງສະພາບໍລິຫານ ຂອງທະນາຄານແຫ່ງ ສປປ ລາວ;
2. ສິດຖອນເງິນພິເສດ ຂອງ ສປປ ລາວ ຢູ່ກອງທຶນການເງິນສາກົນ;
3. ຄຳ ທີ່ທະນາຄານແຫ່ງ ສປປ ລາວຄຸ້ມຄອງ;

4. ພັນທະບັດລັດຖະບານ ແລະ ພັນທະບັດອື່ນ ທີ່ອອກຈຳໜ່າຍ ຫຼື ຄ້ຳປະກັນໂດຍລັດຖະບານຕ່າງປະເທດ ຫຼື ສະຖາບັນການເງິນສາກົນ ເປັນເງິນຕາຕ່າງປະເທດສະກຸນໃດໜຶ່ງ ຕາມການຕົກລົງເຫັນດີຂອງສະພາບໍລິຫານ ຂອງທະນາຄານແຫ່ງ ສປປ ລາວ;

5. ຊັບສິນອື່ນ ຕາມການຮັບຮອງຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄຳ** ໝາຍເຖິງ ຄຳແທ່ງ, ຄຳຮູບປະພັນ ແລະ ຄຳທາງບັນຊີຢູ່ຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງ;

2. **ຄຳທາງບັນຊີຢູ່ຕ່າງປະເທດ** ໝາຍເຖິງ ຄຳຕາມມາດຕະຖານສາກົນ ທີ່ບໍ່ນອນຢູ່ໃນຮູບແບບຄຳແທ່ງ ແຕ່ມີມູນຄ່າທຽບເທົ່າຄຳແທ່ງຕາມລາຄາຢູ່ສາກົນ ໂດຍມີການເກັບຮັກສາໄວ້ທຽບເທົ່າກັບເງິນຝາກ ນຳສະຖາບັນການເງິນສາກົນໃດໜຶ່ງ;

3. **ສະຖາບັນການເງິນສາກົນ** ໝາຍເຖິງ ທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຕ່າງປະເທດ, ກອງທຶນການເງິນສາກົນ ແລະ/ຫຼື ການຈັດຕັ້ງທາງດ້ານການເງິນສາກົນອື່ນ;

4. **ສະກຸນເງິນແຂງ** ໝາຍເຖິງ ສະກຸນເງິນຕາຕ່າງປະເທດທີ່ສາກົນຍອມຮັບ, ສາມາດຊຳລະກັບສາກົນ ແລະ ຊື້ ຂາຍ ໄດ້ຢ່າງຄ່ອງຕົວໃນຕະຫຼາດສາກົນ;

5. **ສິດຖອນເງິນພິເສດ** ໝາຍເຖິງ ຊັບສິນສຳຮອງເງິນຕາຕ່າງປະເທດ ທີ່ຖືກກຳນົດ ແລະ ຮັກສາໂດຍກອງທຶນການເງິນສາກົນ;

6. **ການໝູນທຶນ** ໝາຍເຖິງ ການນຳເອົາຄັງສຳຮອງເງິນຕາຕ່າງປະເທດ ໄປຝາກ ແລະ/ຫຼື ລົງທຶນຊື້ຂາຍ ຢູ່ຕ່າງປະເທດ ໂດຍສ້າງຜົນລາຍຮັບທາງດ້ານການເງິນ.

**ມາດຕາ 4 ຫຼັກການກ່ຽວກັບການເຄື່ອນໄຫວວຽກງານຄັງສຳຮອງເງິນຕາຕ່າງປະເທດ**

ການເຄື່ອນໄຫວວຽກງານຄັງສຳຮອງເງິນຕາຕ່າງປະເທດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;
2. ຮັບປະກັນສະພາບຄ່ອງໃນການປະຕິບັດນະໂຍບາຍເງິນຕາ ແລະ ຊຳລະກັບຕ່າງປະເທດ;
3. ຮັບປະກັນຄວາມປອດໄພໃນການຄຸ້ມຄອງ ແລະ ການໝູນທຶນ;
4. ບໍລິຫານຢ່າງມີປະສິດທິພາບ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຄັງສຳຮອງເງິນຕາຕ່າງປະເທດ.

## ໝວດທີ 2
## ແຫຼ່ງ, ລະດັບ, ການນຳໃຊ້ ແລະ ການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ

**ມາດຕາ 6 ແຫຼ່ງຂອງຄັງສຳຮອງເງິນຕາຕ່າງປະເທດ**

ແຫຼ່ງຂອງຄັງສຳຮອງເງິນຕາຕ່າງປະເທດ ມີດັ່ງນີ້:

1. ການປະກອບຂອງລັດຖະບານ ຊຶ່ງມີ:
   - ລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ;
   - ແຫຼ່ງດຸ່ນດ່ຽງງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ;

- ສິດຖອນເງິນພິເສດ.

2. ການປະກອບຂອງທະນາຄານແຫ່ງ ສປປ ລາວ ຊຶ່ງມີ:
   - ເງິນຕາຕ່າງປະເທດ ທີ່ເກັບຊື້;
   - ຄຳແທ່ງ, ຄຳຮູບປະພັນ ແລະ ຄຳທາງບັນຊີຢູ່ຕ່າງປະເທດ;
   - ລາຍຮັບທີ່ໄດ້ຈາກການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ;
   - ເງິນກູ້, ພັນທະບັດ ແລະ ພັນທະອື່ນ ທີ່ເປັນເງິນຕາຕ່າງປະເທດ;
3. ເງິນຝາກທີ່ເປັນເງິນຕາຕ່າງປະເທດຂອງສະຖາບັນການເງິນ ທີ່ຝາກຢູ່ທະນາຄານແຫ່ງ ສປປ ລາວ;
4. ແຫຼ່ງອື່ນ.

**ມາດຕາ 7 ລະດັບຄັງສຳຮອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄົ້ນຄວ້າກຳນົດລະດັບຄັງສຳຮອງເງິນຕາຕ່າງປະເທດ ບົນພື້ນຖານການຄິດໄລ່ກຸ້ມການນຳເຂົ້າສິນຄ້າ ແລະ ບໍລິການ ທີ່ຈຳເປັນ ໂດຍກຳນົດເຂົ້າໃນແຜນເງິນຕາແຫ່ງຊາດ ປະຈຳປີ ແລະ ຫ້າ ປີ ເພື່ອສະເໜີລັດຖະບານພິຈາລະນາ ນຳສະເໜີສະພາແຫ່ງຊາດຮັບຮອງ.

**ມາດຕາ 8 ການນຳໃຊ້ຄັງສຳຮອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ນຳໃຊ້ຄັງສຳຮອງເງິນຕາຕ່າງປະເທດ ດັ່ງນີ້:

1. ນຳໃຊ້ເພື່ອປະຕິບັດນະໂຍບາຍເງິນຕາ ໂດຍຜ່ານເຄື່ອງມືນະໂຍບາຍເງິນຕາ;
2. ນຳໃຊ້ໃນການຊຳລະກັບຕ່າງປະເທດ;
3. ນຳໄປໝູນທຶນຢູ່ຕ່າງປະເທດ;
4. ນຳໃຊ້ເພື່ອຈຸດປະສົງອື່ນ ຕາມການເຫັນດີຂອງສະພາບໍລິຫານຂອງທະນາຄານແຫ່ງ ສປປ ລາວ ຫຼື ລັດຖະບານ ຕາມແຕ່ລະກໍລະນີ.

**ມາດຕາ 9 ການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ**

ການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ ແມ່ນການນຳເອົາຄັງສຳຮອງເງິນຕາຕ່າງປະເທດ ໄປນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆ ຕາມແຜນການທີ່ຖືກຮັບຮອງ ໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດແຜນການ, ຮູບແບບ, ເຄື່ອງມື, ວິທີການ ແລະ ການຕິດຕາມ ກວດກາ ການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ.

## ໝວດທີ 3
## ການບັນຊີ ແລະ ການລາຍງານ

**ມາດຕາ 10 ການບັນຊີ**

ທະນາຄານແຫ່ງ ສປປ ລາວ ຕ້ອງບັນທຶກການເຄື່ອນໄຫວຄັງສຳຮອງເງິນຕາຕ່າງປະເທດ ໃນລະບົບບັນຊີຂອງທະນາຄານແຫ່ງ ສປປ ລາວ.

ລາຍຮັບ-ລາຍຈ່າຍ ທີ່ເກີດຂຶ້ນຈາກການປະຕິບັດນະໂຍບາຍເງິນຕາ ຕ້ອງບັນທຶກເຂົ້າໃນລາຍຮັບ-ລາຍຈ່າຍ ຂອງທະນາຄານແຫ່ງ ສປປ ລາວ ໃນຮ່ອງການປະຕິບັດນະໂຍບາຍເງິນຕາ.

ລາຍຮັບ-ລາຍຈ່າຍ ທີ່ເກີດຂຶ້ນຈາກການໝູນທຶນຢູ່ຕ່າງປະເທດ ຕ້ອງບັນທຶກເຂົ້າເປັນລາຍຮັບ-ລາຍຈ່າຍ ຂອງທະນາຄານແຫ່ງ ສປປ ລາວ ໃນຮ່ອງລົງທຶນຢູ່ຕ່າງປະເທດ.

**ມາດຕາ 11 ການລາຍງານ**

ທະນາຄານແຫ່ງ ສປປ ລາວ ຕ້ອງລາຍງານສະພາບຄັງສຳຮອງເງິນຕາຕ່າງປະເທດ ໃຫ້ລັດຖະບານ ປະຈຳເດືອນ, ໄຕມາດ ແລະ ປີ. ໃນກໍລະນີຄັງສຳຮອງເງິນຕາຕ່າງປະເທດຫຼຸດລົງ ຫຼື ມີທ່າອ່ຽງຫຼຸດລົງ ຜິດປົກກະຕິ ທະນາຄານແຫ່ງ ສປປ ລາວ ຕ້ອງລາຍງານໃຫ້ລັດຖະບານໂດຍດ່ວນ ພ້ອມທັງສະເໜີມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບການດັ່ງກ່າວ ແລະ ສືບຕໍ່ລາຍງານຈົນກວ່າສະພາບການຈະກັບຄືນສູ່ປົກກະຕິ.

## ໝວດທີ 4
## ການຄຸ້ມຄອງ ແລະ ກວດກາວຽກງານຄັງສຳຮອງເງິນຕາຕ່າງປະເທດ

**ມາດຕາ 12 ອົງການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານຄັງສຳຮອງເງິນຕາຕ່າງປະເທດ ໂດຍປະສານສົມທົບກັບກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າອອກນິຕິກຳ ກ່ຽວກັບການຄຸ້ມຄອງວຽກງານຄັງສຳຮອງເງິນຕາຕ່າງປະເທດ ພ້ອມທັງຈັດຕັ້ງປະຕິບັດ;
2. ຮັກສາ ແລະ ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ມີຄວາມປອດໄພ, ຄ່ອງຕົວ ແລະ ມີປະສິດທິພາບ;
3. ຄົ້ນຄວ້າກຳນົດລະດັບຄັງສຳຮອງເງິນຕາຕ່າງປະເທດ ເຂົ້າໃນແຜນເງິນຕາແຫ່ງຊາດ ເພື່ອສະເໜີລັດຖະບານ ພິຈາລະນາ ນຳສະເໜີສະພາແຫ່ງຊາດຮັບຮອງ;
4. ນຳໃຊ້ຄັງສຳຮອງເງິນຕາຕ່າງປະເທດ ສອດຄ່ອງກັບດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ສະເໜີຂໍ້ມູນ ກ່ຽວກັບແຜນການກູ້ຢືມ ແລະ ການຊຳລະຄືນ ທີ່ເປັນເງິນຕາຕ່າງປະເທດ ຈາກພາກສ່ວນອື່ນກ່ຽວຂ້ອງ;
6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຄັງສຳຮອງເງິນຕາຕ່າງປະເທດ ໃຫ້ລັດຖະບານຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປີດບັນຊີເງິນຝາກສະກຸນເງິນຕາຕ່າງປະເທດ ນຳທະນາຄານແຫ່ງ ສປປ ລາວ ແລະ ນຳເອົາລາຍຮັບເປັນເງິນຕາຕ່າງປະເທດ ຂອງລັດຖະບານທັງໝົດ ເຂົ້າບັນຊີດັ່ງກ່າວ;
2. ຂາຍເງິນຕາຕ່າງປະເທດ ທີ່ເຫຼືອຈາກການນຳໃຊ້ຕາມແຜນງົບປະມານ ໃຫ້ທະນາຄານແຫ່ງ ສປປ ລາວ;
3. ສະໜອງຂໍ້ມູນໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບແຜນການກູ້ຢືມ, ລາຍຮັບທີ່ເປັນເງິນຕາຕ່າງປະເທດ, ແຜນຊຳລະຕົ້ນທຶນ ແລະ ດອກເບ້ຍ ແລະ ລາຍຈ່າຍອື່ນ ທີ່ເປັນເງິນຕາຕ່າງປະເທດ;
4. ສະເໜີຊື້ເງິນຕາຕ່າງປະເທດ ນຳທະນາຄານແຫ່ງ ສປປ ລາວ ເພື່ອຊຳລະໜີ້ສິນ ແລະ ພັນທະ ໃຫ້ຕ່າງປະເທດ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 15 ອົງການກວດກາ**

ອົງການກວດກາວຽກງານຄັງສຳຮອງເງິນຕາຕ່າງປະເທດ ຂອງທະນາຄານ ແຫ່ງ ສປປ ລາວ ມີ ດັ່ງນີ້:

1. ອົງການກວດກາພາຍໃນ ແມ່ນ ຄະນະກຳມະການກວດກາ, ກົມກວດກາພາຍໃນ ແລະ ພະແນກກວດກາພາຍໃນປະຈຳກົມ ທີ່ເຄື່ອນໄຫວວຽກງານຄັງສຳຮອງເງິນຕາຕ່າງປະເທດ;

2. ອົງການກວດກາພາຍນອກ ແມ່ນ ອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດຖະບານ.

**ມາດຕາ 16 ເນື້ອໃນກວດກາ**

ການກວດກາວຽກງານຄັງສຳຮອງເງິນຕາຕ່າງປະເທດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄັງສຳຮອງເງິນຕາຕ່າງປະເທດ;

2. ການນຳໃຊ້ສິດ, ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງທະນາຄານແຫ່ງ ສປປ ລາວ ແລະ ພະນັກງານກ່ຽວຂ້ອງ ກັບວຽກງານຄັງສຳຮອງເງິນຕາຕ່າງປະເທດ;

3. ຄວາມຖືກຕ້ອງ, ຄົບຖ້ວນຂອງເອກະສານລາຍງານ, ການນຳໃຊ້ ແລະ ບໍລິຫານຄັງສຳຮອງເງິນຕາຕ່າງປະເທດ;

4. ການຈັດຕັ້ງປະຕິບັດແຜນການນຳໃຊ້ ແລະ ບໍລິຫານຄັງສຳຮອງເງິນຕາຕ່າງປະເທດ;

5. ປະສິດທິຜົນຂອງການຈັດຕັ້ງປະຕິບັດວຽກງານຄັງສຳຮອງເງິນຕາຕ່າງປະເທດ;

6. ເນື້ອໃນອື່ນ ຕາມລະບຽບການ.

**ມາດຕາ 17 ຮູບການກວດກາ**

ການກວດກາວຽກງານຄັງສຳຮອງເງິນຕາຕ່າງປະເທດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

ຜູ້ຖືກກວດກາ ຕ້ອງອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນທີ່ກ່ຽວຂ້ອງ ໃຫ້ຜູ້ກວດກາ, ການກວດກາ ຕ້ອງດຳເນີນໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

## ມາດຕາ 19 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດຂອງລັດ ສະບັບເລກທີ 102/ນຍ, ລົງວັນທີ 12 ກໍລະກົດ 2000.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າລັດຖະບານແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ